Minnesota Department of Education

# ຖາມ ຕອບ ກ່ຽວກັບຂໍ້ກຳນົດການປະເມີນຜົນເພື່ອຈົບການສຶກສາ

## ຂໍ້ກຳນົດການປະເມີນຜົນເພື່ອຈົບການສຶກສາແມ່ນຫຍັງ?

ເພື່ອທີ່ຈະມີສິດໄດ້ຮັບໃບປະກາດຈົບມັດທະຍົມປາຍຂອງໂຮງຮຽນລັດປະຈຳລັດມິເນໂຊຕາ, ນັກຮຽນທຸກຄົນຕ້ອງໄດ້ເຮດຕາມຂໍ້ກຳນົດປະເມີນຜົນເພື່ອຈົບການສຶກສາ. ອີງຕາມການປັບປຸງກົດໝາຍຂອງລັກມິເນໂຊຕາ ພາກສ່ວນ 120B.30, ການປະເມີນຜົນເພື່ອຈົບການສຶກສາໄດ້ມີການປ່ຽນແປງ ມີຫຼາຍວິທີເພື່ອໃຫ້ໄດ້ຕາມຂໍ້ກຳນົດການປະເມີນຜົນເພື່ອຈົບການສຶກສາຂຶ້ນກັບວ່ານັກຮຽນເຂົ້າຮຽນໃນຊັ້ນປີທີ 8 ໃນຕອນທຳອິດໃນປີໃດ ພໍ່ແມ່ /ຜູ້ປົກຄອງຄວນຕິດຕໍ່ໂຮງຮຽນທີ່ລູກທ່ານຮຽນຢູ່ເພື່ອຂໍຂໍ້ມູນເພີ່ມເຕີມ.

ດ້ວຍການປ່ຽນແປງຂໍ້ກຳນົດການປະເມີນຜົນເພື່ອຈົບການສຶກສາ, ລາຍລະອຽດ ແລະ ຂໍ້ມູນເພີ່ມເຕີມຈະຍັງມີຢູ່ໃນເວັບໄຊທ໌ຂອງ ພະແນກສຶກສາລັດມິເນໂຊຕາ (MDE) ຕາມຄວາມຈຳເປັນ. ກະລຸນາເບິ່ງພາກສ່ວນ ເພື່ອພໍ່ແມ່ເທົ່ານັ້ນ (Just for Parents)ທີ່ເວັບໄຊທ໌ ຂອງ MDE ສຳລັບຂໍ້ມູນຫຼ້າສຸດ. (ໄປ Just for Parents > Testing Information.)

## ມີວິທີໃດແນ່ເພື່ອໃຫ້ໄດ້ຕາມຂໍ້ກຳນົດຂອງການປະເມີນຜົນເພື່ອຈົບການສຶກສາ?

### *ນັກຮຽນຊັ້ນປີ ທີ 12 ຫຼື ແກ່ກວ່າໃນສົກປີການສຶກສາ 2014–2015 (ເຂົ້າຮຽນໃນຊັ້ນປີທີ 8 ທຳອິດໃນປີ 2010–2011 ຫຼືກ່ອນໜ້ານັ້ນ)*

ນັກຮຽນເຫຼົ່ານີ້ສາມາດໄດ້ຕາມຂໍ້ກຳນົດການປະເມີນຜົນເພື່ອຈົບການສຶກສາໃນວິຊາການອ່ານ, ຄະນິດສາດ, ແລະ ການຂຽນບົດໂດຍການປະສົມປະສານໃດໜຶ່ງຈາກໜຶ່ງໃນສາມໂຄງຮ່າງລຸ່ມນີ້ຕາບໃດທີ່ໄດ້ຕາມຂໍ້ກຳນົດໃນແຕ່ລະວິຊາ.

1. ໄດ້ຕາມຂໍ້ກຳນົດການປະເ◌ີນຜົນເພື້ອຈົບການສຶກສາໂດຍຜ່ານ ການປະເມີນຜົນຕາມຂໍ້ກຳນົດຈົບການສຶກສາ (Graduation-Required Assessments for Diploma - GRAD) ໃນວິຊາການອ່ານ, ຄະນິດສາດ, ແລະ ການຂຽນເລື້ອງ, ເຊິ່ງປະກອບມີ:
   - ໄດ້ຄະແນນລະດັບຄວາມຊຳນານ. ຖ້າຫາກນັກຮຽນໄດ້ຄະແນນລະດັບຄວາມຊຳນານ (ໄດ້ ຫຼື ກາຍມາດຕະຖານ) ໃນຊັ້ນປີທີ 10 ຂອງການເສັງການອ່ານໃນການປະເມີນຄວາມສາມາດຂອງລັດມິເນໂຊຕk (Minnesota Comprehensive Assessment - MCA) ແລະ ໃນຊັ້ນຮຽນປີ 11

ຂອງການເສັງວິຊາຄະນິດສາດໃນ MCA,
ໝາຍຄວາມວ່າພວກເຂົາໄດ້ຕາມກຳນົດການປະເມີນຜົນເພື່ອຈົບການສຶກສາໃນວິຊານັ້ນ.

- ນີ້ຍັງລວມເຖິງນັກຮຽນທີ່ເສັງ MCA ຂອງມັດທະຍົມປາຍ-ແບບແກ້ໄຂ ຫຼື ການເສັງທັກສະທາງການສຶກສາຂອງລັດມິເນໂຊຕາ (Minnesota Test of Academic Skills - MTAS) ໃນການເສັງ MCAs.

- ໄດ້ຄະແນນຜ່ານການເສັງການຂຽນບົດໃນການເສັງ GRAD ຫຼື ໃນການອ່ານ ແລະ ວິຊາຄະນິດສາດໃນການເສັງຄືນຂອງ GRAD.
  - ການປະເມີນແບບທາງເລືອກ:
    ໃນການຂຽນສາມາດໃຊ້ກັບນັກຮຽນທີ່ຕ້ອງການປະເມີນຜົນແບບທາງເລືອກເພື່ອໃຫ້ໄດ້ຕາມຂໍ້ກຳນົດຂອງການຂຽນ.
- ວິທີໄດ້ແບບທາງເລືອກຂອງ GRAD, ເຊິ່ງອາດລວມດັ່ງລຸ່ມນີ້:
  - ໄດ້ຄະແນນນຜ່ານສຳຫຼັບບຸກຄົນ (ສຳຫຼັບນັກຮຽນໃນແຜນ IEP ຫຼື 504)
  - ໄດ້ຮັບການຍົກເວັ້ນສຳຫຼັບຜູ້ຮຽນພາສາອັງກິດ (EL)
  - ຜ່ານການປະເມີນຜົນຄວາມໜ້າເຊື່ອຖືຈາກລັດອື່ນໂດຍໄດ້ຮັບການອານຸມັດໂດຍ MDE (ແບບແລກປ່ຽນ)
  - ໄດ້ຕາມຂໍ້ກຳນົດການເສັງຄະນິດສາດແບບທາງເລືອກ
    (ໝາຍເຫດນີ້ບໍ່ມີໃຫ້ສຳຫຼັບນັກຮຽນທີ່ອາດຈະແກ່ກວ່າຊັ້ນປີທີ 12,
    ຍ້ອນວ່ານີ້ແມ່ນທາງເລືອກສຳຫຼັບນັກຮຽນທີ່ເຂົ້າຮຽນໃນຊັ້ນປີທີ 8 ໃນລະຫວ່າງປີ 2009–2010)

**ຫຼື**

2. ນັກຮຽນສາມາດເສັງໃນການປະເມີນຜົນ ACT ສຳຫຼັລການເສັງເຂົ້າວິທະຍາໄລ;
   ການປະເມີນທັງສະການເຮັດວຽກຂອງ WorkKeys, ເສັງຄັດເລືອກເຂົ້າວິທະຍາໄລ, ຫຼື
   ການເສັງຄວາມຖະນັດທາງວິຊາຊີບໃນການບໍລິການກອງທັບ (ຫຼື ASVAB)
   ເພື່ອໃຫ້ໄດ້ຕາມຂໍ້ກຳນົດການປະເມີນຜົນການຈົບການສຶກສາໃນວິຊາການອ່ານ, ຄະນິດສາດ, ແລະ/ຫຼື ການຂຽນ.

**ຫຼື**

3. ໃນໂຮງຮຽນຂອງເມືອງອາດທົດແທນດ້ວຍຄະແນະນຈາກທາງເລືອກ,
   ເທົ່າກັບການປະເມີນເພື່ອໃຫ້ຖືກັບຂໍ້ກຳນົດການປະເມີນຜົນເພື່ອຈົບການສຶກສາ.

### *ນັກຮຽນຊັ້ນປີທີ 11 ໃນສົກຮຽນປີ 2014–2015 (ເຂົ້າຮຽນໃນຊັ້ນປີທີ 8 ໃນປີ 2011–2012)*

ນັກຮຽນເຫຼົ່ານີ້ຈະຕ້ອງໄດ້ເສັງ ACT ສຳຫຼັບຊັ້ນຮຽນປີ 11 ລວມທັງການຂຽນ (ເສັງເຂົ້າວິທະຍາໄລ) ໃນລະຫວ່າງການເສັງທົ່ວລັດໃນປີ 2014–2015ໃນການຂຽນ, ການອ່ານ ແລະ ຄະນິດສາດເພື່ອໃຫ້ໄດ້ຕາມຂໍ້ກຳນົດການປະເມີນຜົນເພື່ອຈົບການສຶກສາ.

ເຖິງຢ່າງໃດກໍ່ຕາມ, ຖ້ານັກຮຽນບໍ່ສາມາດເຂົ້າຮ່ວມໃນການເສັງ ACT ສຳຫຼັບຊັ້ນຮຽນປີ 11 ລວມທັງການຂຽນ ໃນປີ 2014–2015, ນັກຮຽນສາມາດໄດ້ຕາມກຳນົດການປະເມີນຜົນເພື່ອຈົບການສຶກສາໃນການອ່ານ ຄະນິດສາດ ແລະ ຂຽນໄດ້ຜ່ານທຸກການປະສົມປານສານໃນໂຄງຮ່າງສາມແບບທີ່ມີໃຫ້ເລືອກຂ້າງເທິງນັ້ນ ສຳຫຼັບ "ນັກຮຽນຊັ້ນປີ 12 ຫຼື ແກ່ກວ່າໃນສົກຮຽນປີ 2014–2015. ."

### *ນັກຮຽນຊັ້ນຮຽນປີ 10 ຫຼື ອ່ອນກວ່າໃນສົກຮຽນປີ 2014–2015 (ເຂົ້າຮຽນຊັ້ນປີທີ 8 ໃນປີ 2012–2013 ຫຼື ຫຼັງຈາກນັ້ນ)*

ນັກຮຽນເຫຼົ່ານີ້ຈະໄດ້ຕາມຂໍ້ກຳນົດການປະເມີນຜົນເພື່ອຈົບການສຶກສາໂດຍການເຂົ້າຮ່ວມໃນການປະເມີນຜົນທາງອາຊີບແລະມະຫາວິທະຍາໄລ ໃນຫຼາຍຮູບແບບ, ເຊິ່ງຈະຖືກຈັດຂຶ້ນທຳອິດໃນສົກຮຽນປີ 2014–2015:

- ເສັງປະເມີນຜົນເລືອກອາຊີບ ແລະວິທະຍາໄລຂອງ ACT ສຳລັບຊັ້ນປີ 8 (ໝາຍເຫດ: ການປະເມີນຜົນນີ້ບໍ່ມີໃຫ້ທົ່ວລັດສຳຫຼັບນັກຮຽນຊັ້ນປີທີ 8 ໃນສົງການສຶກສາປີ 2013–2014.)

**ແລະ**

- ສັງປະເມີນຜົນແຜນອາຊີບ ແລະ ວິທະຍາໄລຂອງ ACT ສຳລັບຊັ້ນປີ 10

## ສິ່ງທີ່ອາດເປັນໄປໄດ້

- ເສັງເລືອກບ່ອນຂອງ ACT ( ປະເມີນຜົນເລືອກວິທະຍາໄລ)
    - ນັກຮຽນທີ່ຍັງບໍ່ທັນມີຄວາມສາມາດທາງການສຶກສາພ້ອມສັບຫຼັບອາຊີບ ຫຼື ວິທະຍາໄລອີງຕາມຄວາມກ້າວໜ້າຜົນໄດ້ຮັບທາງການສຶກສາລະຫວ່າງຊັ້ນປີທີ 8 ແລະ 10 (ຕາມທີ່ກຳນົດໂດຍຜົນການປະເມີນໃນຊັ້ນປີທີ 8 ແລະ 10) ຕ້ອບໄດ້ເສັງເລືອກມະຫາວິທະຍາໄລກ່ອນເສັງເຂົ້າວິທະຍາໄບໃນລະດູໃບໄມ້ບົ່ງ.

**ແລະ**

- ເສັງຂອງ ACT ລວມທັງການຂຽນສຳຫຼັບຊັ້ນປີ 11 ໃນທົ່ວລັດ (ເສັງເຂົ້າວິທະຍາໄລ)

ຂໍ້ມູນເພີ່ມເຕີມກ່ຽວກັບການເຂົ້າຮ່ວມຂອງນັກຮຽນກັບແຜນງານການສຶກສາສ່ວນບຸກຄົນ (Individualized Education Program - IEP), ລວມທັງນັກຮຽນໃນເງື່ອນໄຂພິເສດ (ເຊັ່ນ: ນັກຮຽນທີ່ຍ້າຍຫຼັງຈາກເສັງປະເມີນຜົນອາຊີບ ແລະ ວິທະຍາໄລ) ຈະມີໃຫ້ໃນເວັບໄຊທ໌ຂອງ MDE.

---

*ສຳຫຼັບຂໍ້ມູນເພີ່ມເຕີມ, ຕິດຕໍ່ :*


ການເສັງທົ່ວລັດ

mde.testing@state.mn.us

ພະແນກສຶກສາລັດເມນີໂຊຕາ

1500 Highway 36 West

Roseville, MN 55113-4266

http://education.state.mn.us


*ພຶດສະພາ 2014*